ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສໍາເລັດກອງປະຊຸມລະດົມຄວາມຄິດເຫັນຕໍ່ຮ່າງກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ



ກອງປະຊຸມເປີດກວ້າງເພື່ອລະດົມຄວາມຄິດເຫັນຕໍ່ຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ໄດ້ສໍາເລັດລົງໃນວັນທີ 26 ມັງກອນ 2018 ເຊິ່ງໄດ້ດໍາເນີນມາເປັນເວລາເຄິ່ງມື້ ທີ່ແຂວງຫຼວງພຣະບາງ ໂດຍການເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ກໍາມະການສໍາຮອງສູນກາງພັກ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ພ້ອມນີ້ ກໍມີບັນດາສະມາຊິກສະພາທ້ອງຖິ່ນ, ຫົວໜ້າຫ້ອງວ່າການແຂວງ, ຫົວໜ້າພະແນກການ ແລະ ຜູ້ຕາງໜ້າຂອງສາຂາທະນາຄານທຸລະກິດຂອງແຂວງຫຼວງພະບາງ, ຊຽງຂວາງ, ຫົວພັນ, ໄຊຍະບູລີ, ອຸດົມໄຊ, ຫຼວງນໍ້າທາ, ບໍ່ແກ້ວ ແລະ ແຂວງຫຼວງນໍ້າທາ.

ກອງປະຊຸມເປີດກ້ວາງໃນຄັ້ງນີ້ ເປັນການປັບປຸງກົດໝາຍຄັ້ງໃຫຍ່ຂອງຂະແໜງທະນາຄານ ຊຶ່ງໄດ້ມີການປັບປຸງທາງດ້ານໂຄງສ້າງ ແລະ ເນື້ອໃນ ໂດຍສະເພາະເນື້ອໃນທາງດ້ານການເຄື່ອນໄຫວວິຊາສະເພາະ ແລະ ການເຄື່ອນໄຫວຂອງກົງຈັກຈໍານວນໜຶ່ງ ເຊັ່ນ: ສະພາບໍລິຫານ, ຄະນະຜູ້ວ່າການ, ກົງຈັກຊ່ວຍວຽກ ແລະ ບຸກຄະລາກອນ, ແຕ່ເນື້ອໃນອັນເປັນພື້ນຖານຂອງທະນາຄານກາງທີ່ສາກົນປະຕິບັດຍັງຮັກສາໄວ້ຄືເກົ່າ ເປັນຕົ້ນ

ແມ່ນຫຼັກການແຫ່ງຄວາມເປັນນິຕິບຸກຄົນ ແລະ ການເປັນທະນາຄານກາງຂອງປະເທດ. ພ້ອມນີ້, ກໍໄດ້ປະກອບເນື້ອໃນໃໝ່ຈຳນວນໜຶ່ງເຂົ້າຕື່ມ ແລະ ການຄົ້ນຄວ້າຮ່າງກົດໝາຍວ່າດ້ວຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແມ່ນໄດ້ດຳເນີນໄປຕາມຂັ້ນຕອນໂດຍໄດ້ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າທີ່ມາຈາກຂະແໜງການລັດທີ່ກ່ຽວຂ້ອງ ຊຶ່ງພາຍຫຼັງທີ່ໄດ້ຮັບການແຕ່ງຕັ້ງຄະນະຮັບຜິດຊອບກໍໄດ້ທົບທວນຄືນການຈັດຕັ້ງປະຕິບັດ, ສຶກສາກົດໝາຍຂອງປະເທດອ້ອມຂ້າງໃນອາຊຽນ, ພາກພື້ນ ແລະ ສາກົນຈຳນວນໜຶ່ງເຊັ່ນ: ຫວຽດນາມ, ກຳປູເຈຍ, ພະມ້າ, ໄທ, ມາເລເຊຍ, ເກົາຫຼີ, ຍີ່ປຸ່ນ, ຣັດເຊຍ ແລະ ຝຣັ່ງ ລວມທັງໄດ້ຖອດຖອນບົດຮຽນຂອງປະເທດດັ່ງກ່າວມາດັດປັບໃຫ້ສອດຄ່ອງກັບສະພາບຕົວຈິງຂອງ ສປປ ລາວ ແລະ ຍັງໄດ້ມີການປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາຈາກຜູ້ແທນກອງປະຊຸມ ອັນໄດ້ເຮັດຮ່າງກົດໝາຍສະບັບນີ້ ມີເນື້ອໃນອຸດົມສົມບູນກ່ວາເກົ່າ.



ທະນາຄານແຫ່ງ ສປປ ລາວ ຖືກສ້າງຂຶ້ນ ໃນວັນທີ 7 ຕຸລາ 1968 ຊຶ່ງມີຊື່ໃນເບື້ອງຕົ້ນຄື: ທະນາຄານປະເທດລາວ ຕາມການຕົກລົງຂອງຄະນະປະຈຳສູນກາງແນວລາວຮັກຊາດ ເພື່ອພິມຈຳໜ່າຍເງິນກີບປົດປ່ອຍອອກນຳໃຊ້ສະເພາະຢູ່ເຂດປົດປ່ອຍ; ນັບແຕ່ປີ 1975-1980, ທະນາຄານປະເທດລາວ ໄດ້ປ່ຽນຊື່ມາເປັນທະນາຄານແຫ່ງຊາດ ໂດຍປະຕິບັດໜ້າທີ່ເປັນເສນາທິການໃຫ້ແກ່ລັດຖະບານໃນການພິມຈຳໜ່າຍເງິນ, ສະໜອງສິນເຊື່ອ ໂດຍສະເພາະການໃຫ້ກູ້ຢືມ ເພື່ອຊຸກຍູ້ການຜະລິດກະສິກຳ, ປະຕິບັດລາຍຮັບ-ຈ່າຍໃຫ້ລັດ, ໃນປີ 1981 ສະພາປະຊາຊົນສູງສຸດ ໄດ້ອອກກົດໝາຍວ່າດ້ວຍສິດຜູກຂາດກ່ຽວກັບວຽກງານທະນາຄານ ຊຶ່ງໄດ້ປ່ຽນຊື່ຈາກທະນາຄານແຫ່ງຊາດ ມາເປັນ ທະນາຄານແຫ່ງລັດຊຶ່ງເປັນລະບົບທະນາຄານຂັ້ນດຽວ; ຈາກນັ້ນ ໂດຍອີງໃສ່ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ, ສະພາລັດຖະມົນຕີໄດ້ອອກມະຕິ ເລກທີ 11/ປສລ, ລົງວັນທີ

12 ມີນາ 1988 ວ່າດ້ວຍການຫັນເອົາລະບົບທະນາຄານ ໄປສູ່ກົນໄກໄລ່ລຽງເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ຊຶ່ງໄດ້ຫັນຈາກທະນາຄານຂັ້ນດຽວມາເປັນທະນາຄານສອງຂັ້ນ ຄື: ທະນາຄານແຫ່ງລັດ ແລະ ທະນາຄານທຸລະກິດ ໂດຍໄດ້ແຍກພາລະບົດບາດການລະດົມເງິນຝາກ ແລະ ສະໜອງສິນເຊື່ອໃຫ້ແກ່ສັງຄົມເປັນໜ້າທີ່ຂອງທະນາຄານທຸລະກິດ, ສ່ວນທະນາຄານແຫ່ງລັດ ແມ່ນຫັນໄປເປັນອົງກອນຄຸ້ມຄອງມະຫາພາກທາງດ້ານເງິນຕາ.

ຈາກສະພາບດັ່ງກ່າວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງທະນາຄານແຫ່ງລັດ ສະພາປະຊາຊົນສູງສຸດ ຈຶ່ງໄດ້ສ້າງກົດໝາຍວ່າດ້ວຍການສ້າງຕັ້ງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 04/ສປສ, ລົງວັນທີ 10 ກໍລະກົດ 1990 ຊຶ່ງໄດ້ປ່ຽນຊື່ຈາກ ທະນາຄານແຫ່ງລັດ ມາເປັນ ທະນາຄານແຫ່ງ ສປປ ລາວ. ຫຼັງຈາກນັ້ນ ຈຶ່ງໄດ້ສ້າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ປັບປຸງບາງມາດຕາໃນປີ 1999 ຊຶ່ງໄດ້ກຳນົດ ຫຼັກການ ແລະ ລະບຽບການພື້ນຖານກ່ຽວກັບ ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ກົງຈັກ ແລະ ການຈັດຕັ້ງ, ລະບົບການເງິນ ແລະ ການບັນຊີ ເປັນຕົ້ນມາ.

ຜ່ານການຈັດຕັ້ງປະຕິບັດກົດໝາຍສະບັບດັ່ງກ່າວ ຕະຫຼອດເວລາ 19 ປີ ກໍເຮັດໃຫ້ທະນາຄານແຫ່ງ ສປປ ລາວ ສາມາດປະຕິບັດພາລະບົດບາດຂອງຕົນຄ່ອງຕົວຍິ່ງຂຶ້ນ ເປັນຕົ້ນແມ່ນສາມາດຮັກສາສະຖຽນລະພາບທາງດ້ານລາຄາ ແລະອັດຕາແລກປ່ຽນໃນລະດັບປົກກະຕິ, ສະຖາບັນການເງິນມີຄວາມໝັ້ນຄົງແລະສາມາດຮັກສາລະດັບຄັງສຳຮອງເງິນຕາຕ່າງປະເທດຂອງລັດ ໃນລະດັບດີ.ພ້ອມນີ້, ລະບົບການຊຳລະໃນສປປລາວກໍໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ.ນອກຈາກການຈັດຕັ້ງປະຕິບັດ 3 ພາລະບົດບາດ ຕົ້ນຕໍແລ້ວ ທະນາຄານແຫ່ງ ສປປ ລາວ ຍັງສາມາດປະຕິບັດໜ້າທີ່ເປັນຕົວແທນຂອງລັດຖະບານໃນການພົວພັນຮ່ວມມືກັບອົງການຈັດຕັ້ງການເງິນສາກົນ ແລະ ບັນດາທະນາຄານກາງຂອງຕ່າງປະເທດໃນພາກພື້ນ ແລະ ສາກົນ.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**